# ເສັ້ງບົດທີ 1

**1** ໃຫ້ທ່ານຍົກຕົວຢ່າງທີ່ຮຽນໂດຍວິທີປຽບທຽບ
ກ. ຂໍ້ຄວາມໜຶ່ງ ______________________________________________
ຂ. ເຫດການໜຶ່ງ ______________________________________________
ຄ. ສະໄໝໜຶ່ງໃນຊີວິດພະເຢຊູ ______________________________________

**2** ແມ່ນຂ່າວປະເສີດ 3 ເຫຼັ້ມໃດທີ່ບັນທຶກຄ້າຍຄືກັນ? ____________________
____________________ ____________________

**3** ເຮົາເຄີຍລວມຂ່າວປະເສີດນັ້ນ ເອີ້ນວ່າຢ່າງໃດ? ____________________

**4** ຂ່າວປະເສີດທັງ 3 ເຫຼັ້ມນັ້ນ ລາຍງານເລື່ອງ 3 ປະການໃດ ໃນສະໄໝປີທີ່ພະເຢຊູຕຽມຕົວ?
______________________________________________
______________________________________________
______________________________________________

**5** ຖ້າເຮົາຮຽນທັງຂ່າວປະເສີດ 4 ເຫຼັ້ມມາລວມກັນ ເຮົາຈະຮຽນໂດຍວິທີໃດ? __________

**6** ຄຳວ່າ "ເຊໂລເຕ" ແມ່ນພາສາກະລີກ ແປວ່າຫຍັງໃນພາສາລາວ? ______________

**7** ຄັນເຮົາຈະຈັດເຫດການຕ່າງໆ ຕາມລຳດັບເວລາ ຈະຈັດໄປຢ່າງໃດ? ______________

**8** ໃນລາຍຊື່ເຫດການຕໍ່ໄປນີ້ ໃຫ້ທ່ານຈົດເລກໃສ່ໃຫ້ຖືກຕາມລຳດັບ ເຫດການໃດເກີດຂຶ້ນກ່ອນ ແລະເຫດການໃດ ຕາມຫຼັງ.
ກ. ______ ໂຢເຊັບ ແລະມາລີອາພາພະເຢຊູເດີນທາງໄປກຸງເຢລູຊາເລັມ ເວລາພະເຢຊູມີອາຍຸ 12 ປີ.
ຂ. ______ ເທວະດາປາກົດແກ່ໂຢເຊັບໃນຄວາມຝັນ ແລະບອກວ່າເດັກທີ່ຈະເກີດມານັ້ນ ເກີດຈາກເດດພະວິນຍານ ບໍລິສຸດ.
ຄ. ______ ເທວະດາໄດ້ປາກົດແກ່ມາລີອາ.
ງ. ______ ມາລີອາໄປຢ້ຽມເອລີຊາເບັດທີ່ແຂວງຢູດາ.
ຈ. ______ ໂຢເຊັບ ແລະມາລີອາພາພະເຢຊູໜີໄປຢູ່ປະເທດເອຢິບ.
ສ. ______ ພວກໂຫຣາຈານເຂົ້າເຝົ້າທີ່ບ້ານເບດເລເຮັມ.
ຊ. ______ ຜູ້ລ້ຽງແກະເຂົ້າເຝົ້າພະອົງໃນຮາງຫຍ້າທີ່ເບດເລເຮັມ.
ຍ. ______ ໂຢເຊັບ ແລະມາລີອາພາພະກຸມມານເດີນທາງໄປກຸງເຢລູຊາເລັມເທື່ອທຳອິດ.
ດ. ______ ກະສັດເຮໂລດສັ່ງຂ້າເດັກນ້ອຍຜູ້ຊາຍທຸກຄົນທີ່ມີອາຍຸແຕ່ສອງປີລົງມາ.

# ເສັ້ງບົດທີ 2

**1** ໃຫ້ທ່ານອ່ານຂໍ້ພະຄຳພີຕໍ່ໄປນີ້ ຂໍ້ໃດທີ່ອ້າງເຖິງໂຢຮັນບັບຕິສະໂຕ ໃຫ້ຂຽນຄຳ "ບັບຕິສະໂຕ" ຂໍ້ໃດທີ່ອ້າງເຖິງ ໂຢຮັນສາວົກ ໃຫ້ຂຽນຄຳ "ສາວົກ".

________________ ກຈກ 1:5 ________________ ກຈກ 1:22

________________ ກຈກ 1:13 ________________ ກຈກ 3:1

**2** ແມ່ນໂຢຮັນໃດ ທີ່ຂຽນຂ່າວປະເສີດ ເຫຼັ້ມທີ 4? ________________________________

**3** ທັງເປໂຕ ອັນເດອາ ແລະ ໂຢຮັນ ຝຶກຝົນດົນປານໃດ ກ່ອນພະເຢຊູເອີ້ນໃຫ້ເຂົາປະອາຊີບມາຕິດຕາມພະອົງເຕັມ ເວລາ? ____________________________________________

**4** ໃຫ້ທ່ານອ່ານລາຍຊື່ເຫດການຕໍ່ໄປນີ້ ເຫດການໃດທີ່ເກີດຂຶ້ນໃນສະໄຫມປີທີ່ພະເຢຊູຕຽມຕົວ ໃຫ້ຫມາຍ √ ໄວ້.

_______ ເລື່ອງນີໂກເດມ _______ ໂຢຮັນບັບຕິສະໂຕຕາຍ

_______ ພະເຢຊູຖືກທົດລອງ _______ ຍິງຊາວຊາມາເລຍ

_______ ຊົງເທດສະຫນາຢູ່ຈ້າຍພູ _______ ຊົງໂຜດຄົນຕາບອດສອງຄົນ

_______ ງານສົມລົດຢູ່ບ້ານການາ _______ ຊົງໂຜດລູກຊາຍເຈົ້ານາຍ

_______ ຊົງໂຜດຂີ້ທູດດີສະອາດ _______ ສາວົກຫມວດທຳອິດ

_______ ເລື່ອງຜູ້ຫວ່ານ _______ ໂຢຮັນບັບຕິສະໂຕເທດສະຫນາ

_______ ພະອົງຮັບບັບຕິສະມາ _______ ຊົງຊຳຮະພະວິຫານເທື່ອທຳອິດ.

**5** ໃນລາຍຊື່ເຫດການຕໍ່ໄປນີ້ ໃຫ້ທ່ານຈົດເລກໃສ່ໃຫ້ຖືກຕາມລຳດັບເວລາທີ່ເຫດການເຫຼົ່ານັ້ນເກີດຂຶ້ນ.

_______ ພະເຢຊູຖືກການທົດລອງ _______ ຊົງໂຜດລູກຊາຍເຈົ້ານາຍໃຫ້ດີ

_______ ຍິງຊາວຊາມາເລຍ _______ ເລື່ອງນີໂກເດມ

_______ ພະອົງຊົງຊຳຮະພະວິຫານເທື່ອທຳອິດ _______ ງານສົມລົດຢູ່ບ້ານການາ

_______ ພະອົງຮັບບັບຕິສະມາ _______ ໂຢຮັນບັບຕິສະໂຕເທດສະຫນາ

_______ ສາວົກຫມວດທຳອິດ

**6** ແມ່ນຂ່າວປະເສີດ 3 ເຫຼັ້ມແລກ ຫຼືຂ່າວປະເສີດໂຢຮັນທີ່ບັນທຶກຫຼາຍ ໃນສະໄຫມປີທີ່ພະເຢຊູຕຽມຕົວ? ____________________________________________

**7** ພະເຢຊູ ພົບສາວົກຫມວດທຳອິດໃນປີໃດ? ________________________________

**8** ພວກເຂົາທັງຫມົດນັ້ນ ເຄີຍເປັນສາວົກຂອງຜູ້ໃດມາກ່ອນ? ______________________

**9** ແມ່ນສາມຄົນໃດທີ່ເຄີຍຕິດຕາມໂຢຮັນບັບຕິສະໂຕມາກ່ອນ? ____________________

________________________________ ________________________________

**10** ພະເຢຊູຊຳຣະພະວິຫານຈັກເທື່ອ? ________________________________________

**11** ພະເຢຊູຊຳຣະພະວິຫານເທື່ອທຳອິດໃນສະໄຫມປີໃດ? __________________________

**12** ແມ່ນຂ່າວປະເສີດເຫຼັ້ມໃດທີ່ບັນທຶກເລື່ອງການຊຳຣະພະວິຫານເທື່ອທຳອິດ? ___________

**13** ຂ່າວປະເສີດໂຢຮັນ ລາຍງານເລື່ອງສະໄຫມປີທີ່ພະອົງຕຽມຕົວ ຈາກບົດໃດໄປຫາບົດໃດ?

________________________________________________________________

**14** ຂ່າວປະເສີດມັດທາຍລາຍງານເລື່ອງສະໄຫມປີທີ່ພະອົງຕຽມຕົວຈາກບົດໃດໄປຫາບົດໃດ ຂໍ້ໃດ? ____________________________________________________________

# ເສັງບົດທີ 3

1 ມີປະສົບການໃດ ຂ້າງໃນທີ່ເປັນເງື່ອນໄຂເຂົ້າອານາຈັກສະຫວັນໄດ້? ________________

2 ແມ່ນຜູ້ໃດເທດສະໜາຢ່າງນັ້ນ ໃນສະໄໝທີ່ພະເຢຊູຖຽມຕົວ? ___________________

3 ຄຳວ່າ "ຖິ້ມໃຈເກົ່າເອົາໃຈໃໝ່" ແປວ່າເຮົາຈະປ່ຽນຫຍັງ? _______________________

4 ຄົນທີ່ຖິ້ມໃຈເກົ່າເອົາໃຈໃໝ່ ຈະສາລະພາບຫຍັງ? ____________________________

5 ແມ່ນໃຜປົກຄອງໃນໃຈຄົນທີ່ຖິ້ມໃຈເກົ່າເອົາໃຈໃໝ່? __________________________

6 ສັນຍາລັກທີ່ວ່າ ຄົນຖິ້ມໃຈເກົ່າເອົາໃຈໃໝ່ມີ 2 ປະການໃດ?

_____________________________ ແລະ _______________________________

7 ໃນສັນຍາລັກ 2 ປະການນັ້ນ ແມ່ນປະການໃດທີ່ແນ່ນອນ? _______________________

8 ໂຢຮັນໃຫ້ຄົນຮັບບັບຕິສະມາໃນນ້ຳ ແຕ່ພະຍຊູໃຫ້ຮັບໂດຍຫຍັງ? _________________

9 ແມ່ນການຮັບບັບຕິສະມາຂອງໃຜ ທີ່ເຮັດໃຫ້ເຮົາມີຜົນຂອງພະວິນຍານບໍລິສຸດ?

_________________________________________________________________

10 ແມ່ນຜູ້ທຳນວາຍໃດໃນພະຄຳພີເດີມ ທີ່ທຳນວາຍກ່ຽວກັບໂຢຮັນບັບຕິສະໂຕ?

_________________________________________________________________

# ເສັງບົດທີ 4

**1** ມີຫຼາຍຄົນທີ່ຮັບບັບຕິສະມາຈາກໂຢຮັນບັບຕິສະໂຕ ແຕ່ມີ 2 ພວກໃນສາສະໜາຢິວເປັນຕົ້ນ ຄືສອງພວກໃດ? ________________________ ________________________

**2** ໃນຄວາມເວົ້າຕໍ່ໄປນີ້ ໃຫ້ທ່ານຂຽນຄຳ "ຟາລິຊາຍ" ຫຼື "ຊາດູກາຍ" ຕາມທີ່ເຫັນວ່າຖືກ.

ກ. __________________ ກຽດຊັງຈັກກະພັດໂລມ

ຂ. __________________ ບໍ່ເຊື່ອໃນການຄືນມາຈາກຕາຍ

ຄ. __________________ ມັກເຂົ້າຮ່ວມກັບຄົນທຳມະດາ

ງ. __________________ ປົກຄອງສານສູງສຸດຂອງພວກຢິວ

ຈ. __________________ ພວກທີ່ມັກຖືຄຳສອນບູຮານເທົ່າກັບພະຄຳພີ

ສ. __________________ ມັກຮ່ວມມືກັບຈັກກະພັດໂລມ

ຊ. __________________ ເປັນເພື່ອນກັບກະສັດເຮໂລດ

ຍ. __________________ ເຊື່ອໃນການຄືນມາຈາກຕາຍ

ດ. __________________ ມັກເຂົ້າຮ່ວມກັບຜູ້ທີ່ມີຕຳແໜ່ງ

ຕ. __________________ ບໍ່ຮັບຮູ້ຄຳສອນບູຮານ

ຖ. __________________ ພວກນີ້ປະກອບດ້ວຍແຕ່ປະໂລຫິດຫຼາຍ

ທ. __________________ ປະໂລຫິດໃຫຍ່ຂຶ້ນກັບພວກນີ້

**3** ຄົນຄຣິສຕຽນທີ່ແຍກເປັນພັກເປັນພວກກ່ຽວກັບພະຄຳພີ ອາດຈະຫຼົງທາງໃນ 2 ດ້ານໃດ?

______________________________________________________________

______________________________________________________________

**4** ເຮົາຈະພົບວິທີແກ້ໄຂບັນຫາກ່ຽວກັບຄຣິສຕຽນແຍກເປັນພັກເປັນພວກ ໃນພະທຳເອເຟໂຊ ບົດໃດ? ______________________________________________

**5** ປະໂລຫິດໃຫຍ່ຂອງພວກຢິວ ຂຶ້ນກັບພວກໃດ ທຸກເທື່ອ? ________________________

**6** ແມ່ນໃຜມີສິດແຕ່ງຕັ້ງປະໂລຫິດໃຫຍ່ນັ້ນ? ________________________________

# ເສັງບົດທີ 5

**1** ເຮົາຈະໃຊ້ຄວາມປຽບທຽບເພື່ອຫຍັງ? ________________________________

**2** ແມ່ນພວກໃດໃນຄຳພີເດີມທີ່ໃຊ້ຄວາມປຽບທຽບຫຼາຍ? ______________________

**3** ຄວາມປຽບທຽບເປັນການຍົກເອົາສິ່ງທີ່ຜູ້ຟັງຮູ້ດີ ມາສະແດງເຖິງຫຍັງ? ____________

**4** ໂຢຮັນບັບຕິສະໂຕເຄີຍປະກາດເລື່ອງຫຍັງ? ______________________________

**5** ຄວາມປຽບທຽບຕໍ່ໄປນີ້ຫມາຍເຖິງອັນໃດ? ແມ່ນໃຜຍົກມາໃຊ້?

ກ. ງູ ຫມາຍເຖິງ ________________________________ ____________

ຂ. ຕົ້ນໄມ້ທີ່ບໍ່ເກີດຜົນດີ ຫມາຍເຖິງ ____________________ ____________

ຄ. ເກືອ ຫມາຍເຖິງ ______________________________ ____________

ງ. ໂຄມທີ່ໄດ້ສ່ອງສະຫວ່າງ ຫມາຍເຖິງ __________________ ____________

ຈ. ອຸບໂມງຝັງສົບທາດ້ວຍປູນຂາວ ຫມາຍເຖິງ _____________ ____________

**6** ທ່ານເອງຈະຍົກຄວາມປຽບທຽບໃດ ມາສະແດງເຖິງຄົນທີ່ມີຄວາມສຸກໃນພະເຢຊູ? ______

________________________________________________________________

**7** ທ່ານຈະຍົກຫຍັງ ມາປຽບທຽບກັບຄົນທີ່ເວົ້າໄປຢ່າງຫນຶ່ງ ແຕ່ເຮັດບໍ່ຖືກກັບຄຳເວົ້າ? ______

________________________________________________________________

# ເສັ້ງບົດທີ 6

**1** ກິດຈະການອັນທຳອິດຂອງພະເຢຊູ ໃນການປະກາດພະທຳຄືຫຍັງ? ________________

**2** ການຮັບສິນບັບຕິສະມາຂອງພະເຢຊູ ແລະການຮັບສິນບັບຕິສະມາຂອງຜູ້ອື່ນແຕກຕ່າງກັນຢ່າງໃດ? ________________

**3** ພະເຢຊູ ຮັບສິນບັບຕິສະມາເພາະເຫດໃດ? ________________

**4** ການຮັບບັບຕິສະມາຂອງພະອົງ ເຮົາເຫັນລັກສະນະຂອງພະເຢຊູ 2 ປະການໃດແດ່?
________________ ແລະ ________________

**5** ການຮັບສິນບັບຕິສະມາຂອງພະອົງ ແລະຄວາມຕາຍຂອງພະອົງທີ່ໄມ້ກາງແຂນມີສ່ວນເຂົ້າກັນໃນດ້ານໃດ? ________________

**6** ພະເຢຊູພົບການທົດລອງອັນໃດ ໃນເມື່ອເວລາຮັບບັບຕິສະມາ? ________________
________________

**7** ການທົດລອງນັ້ນມາທາງປາກຂອງຜູ້ໃດ? ________________

**8** ມີເຄື່ອງອາວຸດດ້ານວິນຍານ 2 ປະການໃດ ທີ່ປາກົດມາເວລາພະອົງຮັບສິນບັບຕິສະມາ?
________________ ແລະ ________________

**9** ຕີເອກອະນຸພາບປະກອບດ້ວຍ 3 ພະພາກໃດ? ________________
________________ ________________

# ເສັງບົດທີ 7

**1** ຫຼັກໂອວາດຄຣິສຕຽນທີ່ສອນວ່າ ພະເຈົ້າມີແຕ່ອົງດຽວຊຶ່ງປະກອບດ້ວຍ 3 ພະພາກຄືຫຍັງ?
________________________________________

**2** ໃບໄມ້ຢ່າງນີ້ ອາດຈະຖືວ່າເປັນສັນຍາລັກໃດ?



________________________________________

**3** ຜູ້ຂຽນບັນທຶກເລື່ອງໃນພະຄຳພີໃຫມ່ໃຊ້ພາສາ
ໃດຂຽນ? ________________________________________

**4** ແມ່ນຂໍ້ໃດໃນພະຄຳພີເດີມທີ່ບອກວ່າ ພະເຈົ້າມີແຕ່ອົງດຽວ? ____________________

**5** ກ. ຄຳວ່າ "ຕີ" ແປວ່າຫຍັງ? ______________________________

ຂ. ຄຳວ່າ "ເອກ" ແປວ່າຫຍັງ? ______________________________

ຄ. ຄຳວ່າ "ອະນຸພາບ" ແປວ່າຫຍັງ? ______________________________

ງ. ລວມ "ຕີເອກອະນຸພາບ" ແປວ່າຫຍັງ? ______________________________

**6** ໃຫ້ທ່ານບອກຂໍ້ພະຄຳພີຢ່າງໜ້ອຍຂໍ້ໜຶ່ງ ທີ່ອ້າງເຖິງພະບຸດໃນພະຄຳພີເດີມ? ________

**7** ໃຫ້ບອກຂໍ້ໜຶ່ງທີ່ອ້າງເຖິງພະວິນຍານ ໃນພະຄຳພີເດີມ? ________________________

# ເສັງບົດທີ 8

**1** ແມ່ນຂໍ້ໃດໃນພະຄຳພີ ທີ່ອ້າງເຖິງພະວິນຍານຂອງພະເຈົ້າ ໃນການນີລະມິດສ້າງໂລກ?

______________________________________________________________

**2** ແມ່ນຂໍ້ໃດໃນພະຄຳພີໃໝ່ ທີ່ເວົ້າເຖິງພາລະຂອງທັງ 3 ພະພາກ ໃນຕີເອກອະນຸພາບ ໃນການໃຫ້ລອດພົ້ນ? ______________________________________________

**3** ໃນພະຄຳພີນັ້ນ ພະບິດາມີສ່ວນຢ່າງໃດໃນການໃຫ້ລອດພົ້ນ? _____________________

ພະບຸດ ມີສ່ວນຢ່າງໃດໃນການໃຫ້ລອດພົ້ນ? ______________________________

ພະວິນຍານ ມີສ່ວນຢ່າງໃດໃນການໃຫ້ລອດພົ້ນ? ____________________________

**4** ຕາມ 1 ໂກລິນໂທ 6:19-20 ຮ່າງກາຍເຮົາເປັນຂອງໃຜ? _______________________

**5** ກ. ຂໍ້ພະຄຳພີໃດເປັນຫຼັກຖານວ່າ ພະເຢຊູເປັນພະເຈົ້າ? _________________________

ຂ. ຂໍ້ພະຄຳພີໃດເປັນຫຼັກຖານວ່າ ພະວິນຍານເປັນພະເຈົ້າ? _____________________

**6** ພະເຢຊູ ຊົງສັ່ງສາວົກໃນ ມັດທາຍ ບົດໃດ ຂໍ້ໃດ? ____________________________

**7** ໃນຄຳສັ່ງນັ້ນ ພະເຢຊູບອກພວກສາວົກວ່າ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດໃຫ້ເຂົ້າຮັບຫຍັງ? ______________________________________________________

ໃນພະນາມແຫ່ງໃຜ? _____________ _____________ ແລະ _____________

**8** ຂໍໃຫ້ທ່ານສະເໜີ 2 ສາດສະໜາໃດແດ່ ທີ່ບໍ່ເຊື່ອໃນຕີເອກອະນຸພາບ.

______________________________ ______________________________

# ເສັງບົດທີ 9

1 ຫຼັກຄວາມເຊື່ອທຳອິດ ແລະທີ່ສຳຄັນທີ່ສຸດ ທີ່ອ້າງເຖິງພະເຈົ້າເປັນອົງດຽວ ໃນສະພາບພະບິດາ ພະບຸດ ແລະ ພະວິນຍານບໍລິສຸດ ຄືຫຼັກໃດ? ________________________________

2 ເພາະເຫດໃດທີ່ເຮົາຈຳເປັນຕ້ອງຈົດຫຼັກຄວາມເຊື່ອນັ້ນໄວ້.

ກ. ____________________________________________________________

ຂ. ____________________________________________________________

ຄ. ____________________________________________________________

3 ໃນຂ່າວປະເສີດມັດທາຍ ທີ່ເປັນຫຼັກພື້ນຖານຂອງຫຼັກຄວາມເຊື່ອນັ້ນ ຢູ່ໃນບົດໃດຂໍ້ໃດ?

______________________________________________________________

4 ແມ່ນພວກໃດ ສອນຜູ້ເຊື່ອໃຫມ່ໃນກຸງເຢລູຊາເລັມ ຫຼັງຈາກວັນເພັນເຕຄໍສະເຕ? _________

5 ພວກຄຣິສຕຽນນັ້ນປະກອບດ້ວຍທັງຊາດຢິວ ແລະໃຜອີກ? _____________________

6 ກ່ອນທີ່ຈະຮັບເຊື່ອໃນພະເຢຊູ ຄົນຢິວເຊື່ອວ່າ ພະເຈົ້າມີຈັກອົງ? __________________

7 ຄົນຕ່າງປະເທດເຊື່ອວ່າ ພະເຈົ້າມີຈັກອົງ? __________________________________

8 ພວກສາວົກສອນວ່າ ມີແຕ່ພະເຈົ້າອົງດຽວຊຶ່ງປະກອບດ້ວຍ 3 ພະພາກ ຫຼັກໂອວາດນັ້ນເອີ້ນ ວ່າຢ່າງໃດ? ____________________________________________________

9 ໃຫ້ທ່ານສະເຫນີຊື່ 3 ນິກາຍ ທີ່ເຊື່ອໃນຫຼັກຄວາມເຊື່ອຕາມເຫຼົ່າອັກຄະສາວົກ.

______________________________________________________________

10 ໃຫ້ທ່ານສະເຫນີຊື່ 3 ສາສະໜາ ທີ່ບໍ່ເຊື່ອໃນຫຼັກຄວາມເຊື່ອຕາມເຫຼົ່າອັກຄະສາວົກ.

______________________________________________________________

11 ມັດທາຍ ຂຽນຄວາມທີ່ອ້າງເຖິງ ຕີເອກອະນຸພາບ ໃນບົດໃດ ຂໍ້ໃດ? _________________
ໂປໂລ ຂຽນຄວາມທີ່ອ້າງເຖິງ ຕີເອກອະນຸພາບ ໃນບົດໃດ ຂໍ້ໃດ?___________________
ເປໂຕ ຂຽນຄວາມທີ່ອ້າງເຖິງ ຕີເອກອະນຸພາບ ໃນບົດໃດ ຂໍ້ໃດ? ___________________
(ເປີດເບິ່ງພະຄຳພີກໍໄດ້)

# ເສັງບົດທີ 10

1 ກ. ສິ່ງທີ່ຈຳກັດ ມີຂອບເຂດບໍ່? ______________________________

ຂ. ສິ່ງບໍ່ຈຳກັດມີຂອບເຂດບໍ່? ______________________________

2 ກ. (ເປີດພະຄຳພີກໍໄດ້) ພະທຳອິບພະຍົບ 6:3 ອ້າງເຖິງຄຸນສົມບັດໃດ ຂອງພະເຈົ້າ?

______________________________

ຂ. ເພງສັນລະເສີນ 139:1-6 ອ້າງເຖິງຄຸນສົມບັດໃດ? ______________________________

ຄ. ພສສ 139:7-12 ອ້າງເຖິງຄຸນສົມບັດໃດ? ______________________________

ງ. ພສສ 90:2 ອ້າງເຖິງຄຸນສົມບັດໃດ? ______________________________

ຈ. ໂຢຮັນ 4:24 ບອກວ່າ ພະເຈົ້າຊົງເປັນຢ່າງໃດ? ______________________________

3 ມັດທາຍ 5:48 ສອນວ່າ ພະເຈົ້າເປັນຢ່າງໃດ? ______________________________

4 ໃຫ້ທ່ານສະເຫນີ 3 ດ້ານທີ່ພະເຈົ້າຊົງດີທີ່ສຸດ. ______________________________

5 ມະນຸດເຮົາຮູ້ໄດ້ແຕ່ສິ່ງທີ່ ______________________ ເປີດເຜີຍໃຫ້. (ຕື່ມຄວາມທີ່ຂາດ)

6 ໃຫ້ທ່ານອະທິບາຍວ່າ ແມ່ນດ້ວຍເຫດໃດທີ່ມະນຸດເຮົາຮູ້ເລື່ອງພະເຈົ້າຫມົດບໍ່ໄດ້?

______________________________

7 ລັກສະນະຂອງພະເຈົ້າ ແປວ່າຫຍັງ? ______________________________

# ເສັງບົດທີ 11

**1** ພະເຢຊູ ຖືກການທົດລອງໃນສະພາບເປັນບຸດມະນຸດ 2 ເທື່ອໃດແດ່? ________________
________________________________________________________________

**2** ກ. ຖ້າເຮັດຕາມໃຈພະຍາມານ ການອັດສະຈັນທຳອິດຈະເປັນອັນໃດ?

________________________________________________________________

ຂ. ແຕ່ຕາມແຜນການຂອງພະເຈົ້າ ການອັດສະຈັນທຳອິດຄືຫຍັງ?

________________________________________________________________

**3** ໃຫ້ອະທິບາຍໃຫ້ແຈ້ງວ່າ ເລື່ອງ 2 ສະພາບຂອງພະເຢຊູ ຈະເຂົ້າກັນໄດ້ຢູ່ໃນບົດໃດ ຂໍ້ໃດໃນພະຄຳພີ? ________________________________________________

**4** ພະຍາມານມາທົດລອງພະເຢຊູ ໃຫ້ໃຊ້ອຳນາດພະເຈົ້າມາແກ້ບັນຫາສ່ວນຕົວໃນສະພາບມະນຸດໃນ 2 ດ້ານໃດ? ______________________ ________________________

**5** ກ. ໃຫ້ທ່ານຍົກການທົດລອງອີກປະການໜຶ່ງ ທີ່ຄ້າຍຄືກັບການທົດລອງໃນປ່າເອົາຈາກພະຄຳພີ? ________________________________________________

ຂ. ໃຫ້ທ່ານຍົກການທົດລອງອີກປະການໜຶ່ງ ທີ່ຄ້າຍຄືກັບການທົດລອງຢູ່ຫຼັງຄາພະວິຫານ?

________________________________________________________________

**6** ໃຫ້ທ່ານອະທິບາຍວ່າ ແມ່ນໂດຍເຫດໃດທີ່ພະເຢຊູ ສາມາດທົນການທົດລອງເຊັ່ນດຽວກັນກັບເຮົາໃນທຸກປະການ ໂດຍບໍ່ໃຊ້ອຳນາດຂອງພະເຈົ້າ? __________________________

________________________________________________________________

________________________________________________________________

# ເສັງບົດທີ 12

1 ກ. ໃນປ່າພະຍາມານວາງແຜນການຈະໃຫ້ພະເຢຊູໄດ້ຫຍັງປາສະຈາກພະເຈົ້າ?

______________________________________________

ຂ. ໃນຫຼັງຄາພະວິຫານພະຍາມານວາງແຜນການຈະໃຫ້ພະເຢຊູ ໄດ້ຫຍັງປາສະຈາກພະເຈົ້າ?

______________________________________________

ຄ. ໃນພູສູງພະຍາມານວາງແຜນທີ່ຈະໃຫ້ພະເຢຊູ ໄດ້ຫຍັງປາສະຈາກພະເຈົ້າ?

______________________________________________

2 ໃນການທົດລອງ 3 ປະການຕໍ່ໄປນີ້ ອັນໃດຄ້າຍຄືກັບການທົດລອງໃນປ່າ? ອັນໃດຄືກັບການທົດລອງຢູ່ຫຼັງຄາ ພະວິຫານ? ອັນໃດຄືກັບຢູ່ພູສູງ?

ກ. ເສດຖີໜຸ່ມໃນ ມັດທາຍ 19:16-22 ______________________

ຂ. ພວກຟາລິຊາຍໃນ ມັດທາຍ 23:1-5 ______________________

ຄ. ພວກຟາລິຊາຍໃນ ມັດທາຍ 23:6-7 ______________________

3 ພະເຢຊູໃຊ້ເຄື່ອງອາວຸດ 2 ຢ່າງໃດ ມາຕໍ່ສູ້ການທົດລອງຂອງພະຍາມານ?

____________________ ____________________

4 ນອກຈາກພະເຢຊູ ແມ່ນໃຜອີກທີ່ຍົກຂໍ້ພະຄຳພີໃນການທົດລອງນັ້ນ? __________

5 ມານຫຼືໝູ່ມານຍົກເອົາຂໍ້ພະຄຳພີມາໃຊ້ຜິດຢ່າງໃດ? ________________

6 ພວກຄຣິສຕຽນເຮົາສາມາດມີໄຊຊະນະໃນການທົດລອງໄດ້ຢ່າງໃດ? __________

7 ຖ້າເຮົາຕໍ່ສູ້ມານ ມັນຈະເປັນຢ່າງໃດ? ______________________

8 ພະເຢຊູ ສອນວ່າຈົ່ງລ້ຽງຊີວິດດ້ວຍພະຄຳທຸກຂໍ້ ທີ່ອອກມາຈາກພະໂອດຂອງພະເຈົ້າ ໃນມັດທາຍ ບົດໃດ ຂໍ້ໃດ? ______________________________

# ເສັງບົດທີ 13

**1** ຂໍ້ໃດທີ່ພະຄຳພີສອນວ່າ ພະຄຳພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພະເຈົ້າ?

______________________________________________________________________

**2** ຖ້າມີຫມູ່ທີ່ບໍ່ເຂົ້າໃຈເລື່ອງພະຄຳພີທ່ານຈະອະທິບາຍຢ່າງໃດ ກ່ຽວກັບການທີ່ພະຄຳພີຖືກຂຽນບັນທຶກໄວ້ໂດຍການຊົງ ບັນດົນໃຈຈາກ ພະວິນຍານບໍລິສຸດ? ______________________

______________________________________________________________________

______________________________________________________________________

**3** ເຂົາຂຽນບັນທຶກພະຄຳພີໃນ 2 ພາສາໃດ?

_________________________________ _________________________________

**4** ຜູ້ຂຽນບັນທຶກພະຄຳພີຢູ່ໃນ 3 ທະວີບໃດ? _________________________________

_________________________________ _________________________________

**5** ໃຊ້ເວລາຂຽນປະມານຈັກປີ? _______________________________________________

**6** ມີຜູ້ຂຽນພະຄຳພີປະມານຈັກຄົນ? ___________________________________________

**7** ພະເຈົ້າໄດ້ຕິດຕໍ່ກັບມະນຸດໂດຍສິ່ງຜູ້ໃດມາ? ___________________________________

**8** ພະເຈົ້າໄດ້ຕິດຕໍ່ກັບມະນຸດ ໂດຍຄຳເວົ້າຊຶ່ງຖືກຂຽນບັນທຶກໄວ້ໃນປຶ້ມຫຍັງ? ____________

# ເສັງບົດທີ 14

**1** ເພື່ອໃດທີ່ເຮົາໃຊ້ຂໍ້ອ້າງໃນພະຄຳພີ ເຮົາຮຽນດ້ວຍວິທີໃດ? ______________________

**2** ແມ່ນຂ່າວປະເສີດເຫຼັ້ມໃດ ທີ່ກ່າວອ້າງຈາກພະຄຳພີເດີມຫຼາຍກວ່າຫມູ່? ____________

**3** ໃນພະຄຳພີເປັນເລື່ອງກ່ຽວກັບໃຜ? ______________________________________

**4** ເປັນຫຍັງ ມັດທາຍກ່າວອ້າງຈາກພະຄຳພີເດີມຫຼາຍ? ___________________________

**5** ໃຫ້ທ່ານຂຽນໃສ່ບ່ອນວ່າງໃນຕາຕະລາງຕໍ່ໄປນີ້: (ເປີດພະຄຳພີກໍໄດ້)

| | *ຄຳທຳນວາຍໃນພະຄຳພີເດີມ (ບອກບົດ ແລະຂໍ້)* | *ເລື່ອງ ພະເມຊີອາ* | *ສຳເລັດໃນພະຄຳພີໃຫມ່ (ບອກບົດ ແລະຂໍ້)* |
|---|---|---|---|
| ກ. | ____________________ | ເກີດຈາກຍິງພົມມະຈາລີ | ________________ |
| ຂ. | ____________________ | ໃນບ້ານເບດເລເຮັມ | ________________ |
| ຄ. | ____________________ | ເຮໂລດສັ່ງຂ້າເດັກນ້ອຍ | ________________ |
| ງ. | ____________________ | ຜູ້ປະກາດໄປກ່ອນ | ________________ |
| ຈ. | ____________________ | ປະກາດໃນແຂວງຄາລີເລ | ________________ |
| ສ. | ____________________ | ເດັກນ້ອຍສັນລະເສີນພະອົງ | ________________ |
| ຊ. | ____________________ | ຂີ່ຕົວລໍ | ________________ |
| ຍ. | ____________________ | ຫີນທີ່ເຂົາຖອກຖິ້ມ | ________________ |

**6** ໃຫ້ທ່ານເປີດ ມັດທາຍ 22:44 ແລ້ວເບິ່ງຂໍ້ອ້າງ. ມັດທາຍ ກ່າວອ້າງຈາກໃສໃນພະຄຳພີເດີມ?

______________________________________________________________

# ເສັ້ງບົດທີ 15

**1** ໃຫ້ທ່ານສະເຫນີຫຼັກຖານຈາກພາຍນອກວ່າ ເຂົາຂຽນພະຄຳພີເຫຼົ່ານີ້ຫຼັງຈາກ ພະເຢຊູຄືນພະຊົນບໍ່ຫຼາຍປີ?

ກ. ______________________________________________

ຂ. ______________________________________________

**2** ຖ້າຜູ້ບັນທຶກພະຄຳພີໃຫມ່ລາຍງານບໍ່ຖືກ ຈະມີຜູ້ໃດຈັບຜິດພວກເຂົາບໍ່?

______________________________________________

**3** ຜູ້ທີ່ຂຽນພະຄຳພີໃຫມ່ ອີງອາໄສແຕ່ຄຳພະຍານຢ່າງໃດ? ____________________

**4** ແຕ່ສະໄຫມຫຼັງຈາກພະເຢຊູຄືນພະຊົນນັ້ນ ມີຄຳຂຽນຈາກພວກລູກສິດຂອງພະອົງແລະມີຄຳຂຽນຈາກນັກປະຫວັດສາດ ອີກດ້ວຍ. ແມ່ນຈຳພວກໃດ ທີ່ມີຕົ້ນສະບັບຫຼາຍກວ່າກັນ?

______________________________________________

**5** ແມ່ນດ້ວຍເຫດໃດທີ່ເຮົາຮູ້ວ່າ ສະບັບເຫຼົ່ານີ້ ທີ່ເຮົາມີໃນທຸກວັນນີ້ບໍ່ຜິດກັບຕົ້ນສະບັບທີ່ເຂົາຂຽນໄວ້ໃນເມື່ອກ່ອນ? ________________________________

**6** ໃຫ້ທ່ານສະເຫນີຫຼັກຖານ 2 ປະການທີ່ນັກບູຮານຄະດີໄດ້ຂຸດຄົ້ນພົບ.

ກ. ສະເຫນີຊື່ 2 ຄົນທີ່ພົບໃນພະຄຳພີໃຫມ່ກ່າວເຖິງ ____________________

ຂ. ສະເຫນີສະຖານທີ່ມາ ຫນຶ່ງແຫ່ງ ____________________

# ເສັງບົດທີ 16 ແລະ 17

**1** ພະເຢຊູ ຖືກທົດລອງດ້ານວັດຖຸສິ່ງຂອງຢູ່ບ່ອນໃດ? ______________________________

**2** ວັດຖຸສິ່ງຂອງສະເໜີຄວາມຍຸດຕິທຳໃນດ້ານໃດ? ______________________________

**3** ວັດຖຸສິ່ງຂອງມີຄວາມບົກພ່ອງ 4 ປະການໃດ?

________________________________ ________________________________

________________________________ ________________________________

**4** ຄວາມຍຸດຕິທຳອັນແທ້ຈິງ ມີໃນບ່ອນໃດ? ______________________________

**5** ຄວາມຍຸດຕິທຳໃນອານາຈັກສະຫວັນ ດີກວ່າຄວາມຍຸດຕິທຳດ້ານວັດຖຸສິ່ງຂອງໃນ 4 ປະການໃດ? ________________________________ ________________________________

________________________________ ________________________________

**6** ຄວາມຊອບທຳ ແລະຄວາມຍຸດຕິທຳອັນແທ້ຈິງມາດ້ວຍອານາຈັກໃດ?

________________________________________________________________

**7** ຖ້າບໍ່ມີຄວາມຍຸດຕິທຳໃນທຸກດ້ານປະຊາຊົນຈະເປັນຢ່າງໃດ?
(ໃຫ້ອະທິບາຍຕາມຄວາມຄິດເຫັນຂອງທ່ານເອງ) ______________________________

________________________________________________________________

________________________________________________________________

________________________________________________________________

# ເສັ້ງບົດທີ 18

**1** ເມື່ອພະເຢຊູຢູ່ຫຼັງຄາພະວິຫານ ພະຍາມານທົດລອງພະອົງໃນດ້ານໃດເປັນຕົ້ນ?

______________________________________________________________________

**2** ກ. 1 ຕີໂມທຽວ 6:9 ອ້າງເຖິງການທົດລອງທີ່ຄ້າຍຄືກັບ ການທົດລອງຂອງພະເຢຊູໃນປ່າຫຼື ຢູ່ຫຼັງຄາພະວິຫານ? ______________________________________

ຂ. ມັດທາຍ 6:25 ອ້າງເຖິງການທົດລອງທີ່ຄ້າຍຄືກັບ ການທົດລອງຂອງພະເຢຊູໃນປ່າ ຫຼືຢູ່ຫຼັງຄາພະວິຫານ? ______________________________________

**3** ນັກເທດ ຫຼືຜູ້ນຳຄຣິສຕຽນອາດຈະຕົກໃນບາບຈອງຫອງຢ່າງໃດ? ________________

______________________________________________________________________

______________________________________________________________________

**4** ຄຣິສຕຽນທົ່ວໄປອາດຈະຕົກໃນບາບຈອງຫອງຢ່າງໃດ? ______________________

______________________________________________________________________

______________________________________________________________________

**5** ຜູ້ທີ່ຊະນະຄວາມຈອງຫອງໃນຊີວິດຂອງຕົນ ຈະມີລັກສະນະຢ່າງໃດ? _____________

______________________________________________________________________

______________________________________________________________________

**6** ມີບາດກ້າວ 2 ປະການໃດທີ່ຈະໃຫ້ເຮົາຊະນະຄວາມຈອງຫອງໄດ້?

ກ. ________________________________________________________________

ຂ. ________________________________________________________________

# ເສັງບົດທີ 19

**1** ໃນການທົດລອງຂອງພະເຍຊູ 3 ປະການນັ້ນ, ແມ່ນປະການໃດທີ່ວ່າດ້ວຍການຕັ້ງອານາຈັກສະຫວັນໄວ້? ________________________________________

**2** ພະເຍຊູເກີດເປັນຊາດຍິວ ອາດຈະມີໃຈຫນຶ່ງວ່າ ຢາກຕັ້ງອານາຈັກສະຫວັນໄວ້ທັນທີເພື່ອປົດປ່ອຍຊາດຍິວຈາກຈັກ ກະພັດໃດ? ________________________________

**3** ແຕ່ຜົນສຸດທ້າຍ ພະເຍຊູເລືອກວ່າຈະຕັ້ງອານາຈັກສະຫວັນໄວ້ໂດຍທາງໃດ? __________
________________________________________________

**4** ອານາຈັກສະຫວັນຈະຕັ້ງໄວ້ດ້ວຍອຳນາດຮຸນແຮງບໍ່ໄດ້, ຕ້ອງຕັ້ງໄວ້ດ້ວຍຫຍັງ? ________
________________________________________________

**5** ໃນລາຍຊື່ຕໍ່ໄປນີ້ ໃຫ້ທ່ານຫມາຍຂໍ້ໃດທີ່ອີງອາໄສການຂອງພະຍາມານ

ກ. _______ ຫຼິ້ນການພະນັນເພື່ອໄດ້ເງິນເອົາໄປຖະຫວາຍໃນຄຣິສຕະຈັກ.

ຂ. _______ ຖະຫວາຍນຶ່ງສ່ວນສິບດ້ວຍບໍ່ຢາກໃຫ້ຜູ້ອື່ນຮັບຮູ້.

ຄ. _______ ຖະຫວາຍເງິນເພື່ອໃຫ້ຄົນເຫັນ ໃຫ້ເຂົາຍົກຍໍວ່າເປັນຄົນໃຈກວ້າງ.

ງ. _______ ຊ່ວຍຜູ້ຮັບໃຊ້ພະເຈົ້າໃນທຸກວິທີທາງ.

ຈ. _______ ສະແດງກຽດຕິຍົດຕໍ່ຜູ້ຮັ່ງມີເປັນຕົ້ນ ຫວັງວ່າເຂົາຈະຖະຫວາຍເງິນຫຼາຍ ໆ.

ສ. _______ ໃຊ້ຂອງປະທານທີ່ພະເຈົ້າໃຫ້ ເພື່ອອວດອ້າງໃຫ້ຄົນສັງເກດວ່າເຮົາຢູ່ໃກ້ຊິດກັບພະເຈົ້າ.

ຊ. _______ ອ້ອນວອນຢ່າງລັບ ເພື່ອຄຣິສຕະຈັກທົ່ວໄປ.

ຍ. _______ ຊັກຊວນໃຫ້ຄົນອອກຈາກຄຣິສຕະຈັກຂອງເຂົາ ມາຄຣິສຕະຈັກຂອງເຮົາ.

ດ. _______ ຮ້ອງເພງສັນລະເສີນພະເຈົ້າ.

# ເສັງບົດທີ 20

**1** ຖ້າເຮົາຖິ້ມໃຈເກົ່າເອົາໃຈໃຫມ່ແລ້ວ ເຮົາຈະຄືນດີກັບໃຜແດ່? ____________________

**2** ກະສັດດາວິດຮັບສາລະພາບຜິດບາບ ໃນເພງສັນເສີນ 2 ບົດໃດ? _________ ________

**3** ເຮົາຄວນຈະສາລະພາບບາບຕໍ່ໜ້າໃຜກ່ອນ? ______________________________

ເພາະເຫດໃດ? ____________________________________________________

**4** ທ່ານໄດ້ທ່ອງຂໍ້ພະຄຳພີທີ່ເປັນຄຳກ່າວອ້າງຈາກຂໍ້ພະຄຳພີທີ່ວ່າ ພະເຈົ້າຈະຍົກບາບຈາກຄົນທີ່ສາລະພາບບາບ, ໃຫ້ ການຂຽນມາ ຈາກພະຄຳພີ ບົດແລະຂໍ້ໃດ, ໃນຂໍ້ນັ້ນເວົ້າຢ່າງໃດ? (ໃຫ້ຂຽນລະອຽດ) ______________________________________________

____________________________________________________________

____________________________________________________________

**5** ເຮົາສົມຄວນຈະຮັບສາລະພາບບາບໃດຕໍ່ຄົນ? ______________________________

____________________________________________________________

**6** ການສາລະພາບບາບເກີດມີຜົນ 3 ປະການໃດ?

ກ. ________________________________________________________

ຂ. ________________________________________________________

ຄ. ________________________________________________________

**7** ຖ້າເຮົາເຮັດໃຫ້ສິ່ງທີ່ມີຄ່າເສຍໄປ ເຮົາຈະສາລະພາບຕໍ່ພະເຈົ້າກ່ອນ ແລະສາລະພາບຕໍ່ຜູ້ກ່ຽວ, ຕໍ່ໄປຈະເຮັດ ຢ່າງໃດກັບສິ່ງທີ່ເສຍໄປແລ້ວ? ______________________________

# ເສັງບົດທີ 21

**1** ສ່ວນຜູ້ທີ່ອ້ອນວອນດັ່ງຕໍ່ໄປນີ້: "ຂ້າພະເຈົ້າຮັບຮູ້ວ່າເປັນຄົນບາບຢູ່ ແຕ່ເປັນຢ່າງໃດກໍຕາມ ບາບຂອງຂ້າພະເຈົ້າບໍ່ ຮ້າຍແຮງປານໝູ່" ຄົນນັ້ນສາລະພາບບາບບໍ່ຖືກໃນດ້ານໃດ?

____________________________________________________________

ຈະແກ້ໄຂຢ່າງໃດ? ____________________________________________

**2** ອີກຄົນໜຶ່ງອາດຈະອ້ອນວອນຢ່າງນີ້: "ບາບຂອງຂ້າພະເຈົ້າໃຫຍ່ຈົນກວ່າ ພະເຈົ້າຈະບໍ່ຍົກຜິດໃຫ້ຫາຍຈັກເທື່ອ" ຄົນນີ້ສາລະພາບບາບບໍ່ຖືກໃນດ້ານໃດ? ______________________

ເຮົາຈະແນະນຳຄົນນີ້ຢ່າງໃດ? ________________________________________

**3** ໃຫ້ເປີດອ່ານ ຟລປ 4:6 ແລ້ວຂຽນຄຳອ້ອນວອນສາລະພາບບາບໃນຊີວິດຂອງເຮົາເອງ ຕາມແບບຂໍ້ພະຄຳພີນັ້ນ. ____________________________________________

____________________________________________________________

____________________________________________________________

____________________________________________________________

**4** ຖ້າຈະປະຕິບັດຊີວິດຕາມ ຟລປ 4:8 ທ່ານຈະຕ້ອງເຮັດຢ່າງໃດ? __________________

____________________________________________________________

____________________________________________________________

____________________________________________________________

# ເສັງບົດທີ 22

**1** ກ່ອນທີ່ນີໂກເດມບໍ່ໄດ້ມາຫາພະເຢຊູ ເພິ່ນຄຶດວ່າຈະເຂົ້າໃນອານາຈັກສະຫວັນໂດຍຖືຫຍັງ?

______________________________________________________________

**2** ແຕ່ພະເຢຊູຕອບວ່າ ຈະເຂົ້າໃນອານາຈັກສະຫວັນຢ່າງໃດ? ______________________

**3** ພະເຢຊູຍົກຕົວຢ່າງໃດ ມາປຽບກັບພະວິນຍານໃນຊີວິດຂອງຄົນທີ່ບັງເກີດໃຫມ່?

______________________________ ______________________________

**4** ໃຫ້ທ່ານອະທິບາຍວ່າ ການກຳເນີດດ້ານຮ່າງກາຍ ແລະການກຳເນີດດ້ານຈິດວິນຍານຕ່າງກັນຢ່າງໃດ? ______________________________________________________

______________________________________________________________

**5** ນິໂກເດມຂຶ້ນກັບພວກໃດໃນສາດສະຫນາຢິວ ຈຶ່ງເຊື່ອວ່າຈະເຂົ້າໄປໃນອານາຈັກສະຫວັນທາງພະບັນຍັດທີ່ໃຫ້ກັບ ໂມເຊໃນສະໄຫມກ່ອນ? ______________________________

**6** ມີບາດກ້າວ 2 ປະການໃດ ໃນການບັງເກີດໃຫມ່? ____________________________

______________________________________________________________

# ເສັງບົດທີ 23

**1** ພະເຢຊູພົບກັບຍິງຊາວຊາມາເລຍ ໃນສະໄໝປີໃດ? ___________________________
ເລື່ອງນີ້ທ່ານຮຽນຮູ້ໄດ້ຢ່າງໃດ? ___________________________________________

**2** ເປັນຫຍັງເຂົາປະຫຼາດໃຈທີ່ພະເຢຊູ ເວົ້າກັບຍິງນັ້ນ? ___________________________

_________________________________________________________________

ທ່າທີຂອງພະເຢຊູ ໃນການນັ້ນເປັນບົດຮຽນຕໍ່ເຮົາຢ່າງໃດ? ______________________

_________________________________________________________________

**3** ກ. ທີ່ພະເຢຊູ ຍົກນໍ້າມາເປັນຕົວຢ່າງ ພະອົງອ້າງເຖິງນໍ້າພຸໃນບົດໃດ ຂໍ້ໃດ? ___________
ຂ. ອ້າງເຖິງແມ່ນໍ້າອັນມີຊີວິດໃນບົດໃດ ຂໍ້ໃດ? ________________________________

**4** ກ. ໃນ ໂຢຮັນ 4:14 ແມ່ນຄວາມຫິວຂອງຕົນເອງ ຫຼືຂອງຜູ້ອື່ນທີ່ຈະຫາຍໄປ? _________
ຂ. ໃນ ໂຢຮັນ 7:38 ແມ່ນຄວາມຫິວຂອງຕົນເອງ ຫຼືຂອງຜູ້ອື່ນທີ່ຈະຫາຍໄປ? _________

**5** ແມ່ນໃຜປະທານພະວິນຍານໃຫ້? ________________________________________

**6** ຜູ້ທີ່ຈະຮັບພະວິນຍານ ຕ້ອງເຊື່ອໃນໃຜກ່ອນ? ______________________________

**7** ໃນເຫດການກ່ຽວກັບພະເຢຊູ ແລະຍິງຊາວຊາມາເລຍນີ້ມີອັນໃດສະແດງວ່າ:
ກ. ພະເຢຊູເປັນພະເຈົ້າ? _______________________________________________
ຂ. ພະເຢຊູເປັນມະນຸດ? _______________________________________________

**8** ມີບົດຮຽນທີ່ວ່າ ເຮົາຈະນະມັດສະການພະເຈົ້າຢູ່ໃສ? ___________________________

_________________________________________________________________

# ເສັງບົດທີ 24

1 ໃນເມື່ອຕັ້ງຕົ້ນປ່າວປະກາດພະຄຳໃນເມືອງນາຊາເລັດ ພະເຢຊູໃຊ້ອາວຸດດ້ານວິນຍານຢ່າງໃດແດ່? ______________________________

2 ພະເຢຊູເລີ້ມຕົ້ນເທດສະໜາໃນໂຮງທຳນາຊາເລັດ ໂດຍອ່ານຈາກພະທຳຂອງຜູ້ທຳນວາຍໃດ? ______________________________

3 ແມ່ນຜູ້ທຳນວາຍໃດທີ່ປະກາດວ່າ ພະເມຊີອາຮັບການຫົດສົງ ດ້ວຍພະວິນຍານແຫ່ງອົງພະຜູ້ເປັນເຈົ້າ? ______________________________

4 ຄຳທຳນວາຍນັ້ນຖືກກ່າວອ້າງໃນຂ່າວປະເສີດ ບົດໃດ ຂໍ້ໃດ? ______________________________

5 ຕາມຄຳເທດສະໜາຂອງພະເຢຊູ ຢູ່ນາຊາເລັດນັ້ນ ຜູ້ທີ່ປະກາດພະທຳໃຕ້ອຳນາດຂອງພະວິນຍານ ຈະປະກາດແກ່ ໃຜ ມີຜົນຢ່າງໃດ? ______________________________

______________________________

______________________________

______________________________

# ເສັງບົດທີ 25

**1** ພະຄຳພີໃຫມ່ບັນທຶກເລື່ອງຄຳເທດສະຫນາເທື່ອທຳອິດຂອງພະເຢຊູ ຢູ່ບ່ອນໃດ? ________
__________________________________________________________________

**2** ຊາວນາຊາເລັດຜິດໃນດ້ານໃດ? ________________________________________

**3** ດິນທີ່ພວກຊາດຢິວຢູ່ເອີ້ນຊື່ວ່າ "ປາແລັດສະຕິນ" ໃນພາສາຂອງຊາດໃດ? ____________

**4** ພວກຊາດຢິວເຄີຍເອີ້ນດິນນັ້ນວ່າ ປະເທດໃດ? ________________________________

**5** ຕາມຄຳເທດສະຫນາຂອງພະອົງ ແມ່ນພວກໃດທີ່ຖືວ່າພະພອນຂອງພະເຈົ້າ ບໍ່ສຳຄັນ? ____
__________________________________________________________________

**6** ແມ່ນພວກໃດທີ່ບໍ່ໄດ້ຮັບພະພອນຂອງພະເຈົ້າຫຼາຍ ແຕ່ເຂົາຖືວ່າພະພອນທີ່ໄດ້ຮັບນັ້ນສຳຄັນຫຼາຍ? _____________________________________________________________

**7** ຖ້າເຮົາດູຖູກພະພອນທີ່ພະເຈົ້າປະທານໃຫ້ ຢ້ານວ່າເຮົາຈະເປັນຢ່າງໃດຕໍ່ໄປ? __________
__________________________________________________________________

**8** ຂໍໃຫ້ທ່ານສະເຫນີພະພອນທີ່ພະເຈົ້າປະທານໃຫ້ສະເພາະທ່ານເອງຢ່າງຫນ້ອຍ 3 ປະການ:
__________________________________________________________________
__________________________________________________________________
__________________________________________________________________